| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດໍາເນີນກິດຈະການ ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ບໍລິການ Cloud |
| **ປະເພດເອກະສານ** | ໃບອະນຸຍາດດໍາເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 31.10.2017 |
| **ພາກສ່ວນຮັບຜິດຊອບ** | ກົມເຕັກໂນໂລຊີດີຈີຕ້ອນ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ບຸກຄົນ ຫຼື ນິຕິບຸກຄົນ ທີ່ດໍາເນີນກິດຈະການໃຫ້ເຊົ່າພື້ນທີ່ຕິດຕັ້ງອຸປະກອນ, ເຊົ່າບ່ອນວາງເຄື່ອງເຊີເວີ, ເຊົ່າໃຊ້ເຊີເວີ, ເຊົ່າພື້ນທີ່ເຊີເວີ, ເຊົ່າໃຊ້ຊອບແວຣ, ເຊົ່າໃຊ້ຖານຂໍ້ມູນ ແລະ ອື່ນໆ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ. |
| **ເງື່ອນໄຂໃນການຂໍເອກະສານ** | ຜູ້ຮ້ອງຂໍຕ້ອງປະຕິບັດໃຫ້ສອດຄ່ອງກັບ ມາດຕະຖານດັ່ງຕໍ່ໄປນີ້:1. ມາດຕະຖານດ້ານທີ່ຕັ້ງ - ຕ້ອງຢູ່ໃນສະຖານທີ່ເໝາະສົມ, ໂຄງສ້າງອາຄານ ຕ້ອງມີຝາອາຄານໜາຢ່າງໜ້ອຍ 20 cm ມີລະບົບປ້ອງກັນໄຟໄໝ້ ຕາມມາດຕະຖານ TIA-942, ພື້ນທີ່ຫ້ອງ ຕ້ອງສາມາດຮອງຮັບນໍ້າໜັກໄດ້ບໍ່ຕໍ່າກວ່າ 800 kg/sq.m; 2. ມາດຕະຖານດ້ານເຕັກນິກ - ຕ້ອງເຊື່ອມຕໍ່ຫາສູນອິນເຕີເນັດແຫ່ງຊາດໂດຍກົງ ຫລື ຜ່ານຜູ້ໃຫ້ບໍລິການອິນເຕີເນັດ, ຕ້ອງມີອຸປະກອນຕິດຕາມ ແລະ ເກັບກໍາຂໍ້ມູນທັງໝົດຂອງລູກຄ້າ ແລະ ຕ້ອງມີລະບົບເກັບກໍາຂໍ້ມູນສໍາຮອງ; ອຸປະກອນທີ່ໃຊ້ຕ້ອງຖືກຕ້ອງຕາມມາດຕະຖານເຕັກນິກ ຜ່ານການກວດສອບ ແລະ ຮັບຮອງມາດຕະຖານ ໂດຍອຸປະກອນທັງໝົດ ຕ້ອງຕັ້ງຢູ່ໃນ ສປປ ລາວ; ຕ້ອງເຮັດແຜນການຕິດຕັ້ງເຄືອຂ່າຍອຸປະກອນຕ່າງໆ ໃຫ້ສອດຄ່ອງກັບ ເຕັກໂນໂລຊີ ແລະ ມາດຕະຖານ ທີ່ກະຊວງ ກໍານົດໄວ້ແຕ່ລະໄລຍະ; 3. ມາດຕະຖານດ້ານຄວາມປອດໄພ - ຕ້ອງມີລະບຽບການລະອຽດ ໃນການຄຸ້ມຄອງ, ການບໍາລຸງຮັກສາ ແລະ ລະບົບແກ້ໄຂບັນຫາສຸກເສີນຕ່າງໆ ໂດຍສະເພາະ ວິທີການທີ່ເໝາະສົມ ແລະ ທັນການ ເພື່ອຮັບປະກັນວ່າ ຂໍ້ມູນທັງໝົດຂອງຜູ້ໃຊ້ບໍລິການ ມີຄວາມປອດໄພ ເຊັ່ນ Firewall, Anti-DOS, Filtering |

| ກົດໝາຍ ແລະ ນິຕິກໍາອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ກົດໝາຍວ່າດ້ວຍ ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ | 02/ສພຊ | 11.07.2016 | |
| ດໍາລັດ ວ່າດ້ວຍ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ | 412/ລບ | 10.11.2016 | |
| ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນກິດຈະການສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ | 590/ປທສ | 18.03.2016 | |
| ລັດຖະບັນຍັດຂອງປະທານປະເທດ ສປປ ລາວ ວ່າດ້ວຍ ຄ່າທໍານຽມ ແລະ ຄ່າບໍລິການ | 003/ປທທ | 26.12.2012 | ມາດຕາ 28.3.2 ແລະ ມາດຕາ 29.2.2.3.2 |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມເຕັກໂນໂລຊີດີຈີຕ໋ອນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 15 | 1. ໃບອະນຸຍາດແບບທີ 1 ໃຊ້ເວລາພິຈາລະນາ ພາຍໃນ 30 ວັນລັດຖະການ2. ໃບອະນຸຍາດແບບທີ 2 ໃຊ້ເວລາພິຈາລະນາ ພາຍໃນ 20 ວັນລັດຖະການ3. ໃບອະນຸຍາດແບບທີ 3 ໃຊ້ເວລາພິຈາລະນາ ພາຍໃນ 15 ວັນລັດຖະການ |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 60 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ** | 1. ອາຍຸໃບອະນຸຍາດ ແມ່ນ ແບ່ງເປັນ 2 ໄລຍະຄື: (i) ໄລຍະທີ 1 ອອກໃບອະນຸຍາດຊົ່ວຄາວ ມີອາຍຸ 1 ປີ ແລະ (ii) ໄລຍະທີ II ອອກໃບອະນຸຍາດສົມບູນ ຊຶ່ງມີອາຍຸ - 5 ປີສໍາລັບ ແບບທີ 1, 3 ປີສໍາລັບ ແບບທີ 2 ແລະ 2 ປີ ສໍາລັບ ແບບທີ 32. ການຍື່ນຕໍ່ໃບອະນຸຍາດນີ້ ຕ້ອງຍື່ນໃບຄໍາຮ້ອງຂໍຕໍ່ ກ່ອນວັນໝົດອາຍຸ ຢ່າງໜ້ອຍ 30 ວັນ ໂດຍຕ້ອງປະຕິບັດຕາມເງື່ອນໄຂ ແລະ ຍື່ນເອກະສານຕາມທີ່ກໍານົດໄວ້ |

| **ຄ່າທໍານຽມສໍາລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄໍາຮ້ອງ ຫຼື ບໍ?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 5000000.00 | 50000.00 | 0.00 | 5050000.00 |
| **Comments** | ຄ່າທໍານຽມ ແລະ ຄ່າບໍລິການ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ (ປັດຈຸບັນ ອີງຕາມລັດຖະບັນຍັດ ເລກທີ 003/ປປທ, ລົງວັນທີ 26 ທັນວາ 2012) | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາ ເຫັນຄ່າ ທໍານຽມເພີ່ມເຕີມ** | | | | |

| **ຄ່າທໍານຽມສໍາລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າໃບຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ບໍ່ມີ | 5000000.00 | 50000.00 | 0.00 | 5050000.00 |
| **ຄໍາເຫັນ** | ຄ່າທໍານຽມ ແລະ ຄ່າບໍລິການ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ (ປັດຈຸບັນ ອີງຕາມລັດຖະບັນຍັດ ເລກທີ 003/ປປທ, ລົງວັນທີ 26 ທັນວາ 2012) | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາ ເຫັນກ່ຽວກັບຄ່າ ທໍານຽມຕໍ່ອາຍຸເພີ່ມເຕີມ** | | | | |